**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ

ເລກທີ 0494 /ກສ.ວກປຈ
ນະຄອນປາກເຊ, ວັນທີ 07 APR 2026

## ຫນັງສືແຈ້ງເຊີນປະມູນ

1. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນ ໂຄງການ ຟື້ນຟູ-ສ້ອມແປງຫ້ອງວິໄຈ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ. ກຳນົດໄລຍະເວລາ 12 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ມີໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025 ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ໂດຍພົວພັນຫາ ທ່ານ ບຸນໂຮມ ໄຊສົງຄາມ ຫົວຫ້າພະແນກບໍລິຫານ ແລະ ແຜນການ, ເບີໂທລະສັບ 02098913739 ແລະ ຊື້ເອກະສານປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນໜັງສືສະເໜີຫາ ພະແນກບໍລິຫານ ແລະ ແຜນການວິທະຍາໄລກະສິກຳ ແລະ ປ່າໄມ້ ຈໍປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ, ທ່ານ ບຸນໂຮມ ໄຊສົງຄາມ ເບີໂທລະສັບ 02098913739(ໃນໂມງລັດຖະການ), ເລີ່ມແຕ່ 07 ເມສາ ຫາ 12 ພຶດສະພາ 2026 ເປັນຕົ້ນໄປ, ໃນ ລາຄາ 8,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.
6. ຊອງປະມູນຕ້ອງສົ່ງ, ໃນເວລາ ຫຼື ກ່ອນເວລາ 14:00 ໂມງ, ວັນທີ 12 ພຶດສະພາ 2026 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:30 ໂມງ, ວັນທີ 12 ພຶດສະພາ



สแกนด้วย CamScanner

2026 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

7. ທຸກໆ ຊອງປະມູນ ຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ ຊຶ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

8. ທີ່ຢູ່: ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານ ກາງ, ນະຄອນປາກເຊ, ແຂວງຈຳປາສັກ.

**ຜູ້ອຳນວຍການ**

ສຸລິວົງ ໄຊຍະວົງ



สแกนด้วย CamScanner